OUNTHAPHANH. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 130 – 137

# ປັດໄຈທີ່ສົ່ງຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ

**ບຸນເລື່ອມ ອຸ່ນທະພັນ[1], ສຸດທິດາ ຮຸ່ງແສງຟ້າ[2], ສຸກສະໝອນ ແສງຈັນ[3]**

*ພາກວິຊາ ບໍລິຫານທຸລະກິດ ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

[1]*ຕິດຕໍ່ພົວພັນ: ບຸນເລື່ອມ ອຸ່ນທະພັນ, ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ,* +856 2054948448, lanoyounthaphan@gmail.com.

[2] *ສະຖາບັນຂົງຈື ມະຫາວິທະຍາໄລ ສຸພານຸວົງ,* +856 20 55842828, soudthida@gmail.com

[3] *ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລ ສຸພານຸວົງ,* +856 20 59399322, souksamone08@gmail.com

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 17 ມີນາ 2023*

*ການປັບປຸງ: 15 ພຶດສະພາ 2023*

*ການຕອບຮັບ: 28 ພຶດສະພາ 2023*

**ບົດຄັດຫຍໍ້**

ການສຶກສາຄັ້ງນີ້ມີຈຸດປະສົງເພື່ອສຶກສາລະດັບຄວາມສຳຄັນ ແລະ ຄວາມສຳພັນບັນດາຂອງບັນດາປັດໄຈທີ່ມີຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາ ວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ. ໂດຍນຳໃຊ້ທິດສະດີຄວາມຕັ້ງໃຈ ແລະ ຄວາມຕ້ອງການໃນການເປັນຜູ້ປະກອບການການປະກອບມີ 5 ອົງປະກອບຄື: ດ້ານທັດສະນະຄະຕິ, ດ້ານການສຶກສາ, ດ້ານບັນທັດຖານທາງສັງຄົມ, ດ້ານການຮັບຮູ້ການເປັນຜູ້ປະກອບການທີ່ປະສົບຜົນສຳເລັດ ແລະ ດ້ານຄວາມສາມາດຂອງຕົນເອງໃນການເປັນຜູ້ປະກອບການ. ໂດຍການວິເຄາະຫາຄວາມສຳພັນແລະປັດໄຈທີ່ມີຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາ ວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ. ກຸ່ມຕົວຢ່າງທີ່ໃຊ້ການສຶກສາແມ່ນ ນັກສຶກສາທີ່ກຳລັງຮຽນຢູ່ໃນວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ຈຳນວນ 80 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການລວບລວມຂໍ້ມູນແມ່ນ ແບບສອບຖາມ ທີ່ມີລັກສະນະຄ່າ 5 ລະດັບຂອງ Likert Scale, ເຊິ່ງມີຄ່າຄວາມໜ້າເຊື່ອໝັ້ນໄດ້ເທົ່າກັບ 0.911 ແລະ ສະຖິຕິໃນການວິເຄາະຂໍ້ມູນໄດ້ແກ່: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າເຜຍ ແລະ ສົມຜົນທົດຖອຍພະຫຸຄູນ (Multiple Regression) ດ້ວຍວິທີ Enter ໂດຍໂປຼແກຼມສຳເລັດຮູບທາງສະຖິຕິ SPSS.

ຜົນການຄົ້ນຄວ້າພົບວ່າ: ລະດັບຄວາມສຳຄັນຂອງຂອງປັດໄຈທີ່ມີຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການໃນທຸລະກິດໃດໜຶ່ງຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{X}$ = 3.79 ແລະ SD = 0.583) ແລະ ນັກສຶກສາຄວາມຄາດຫວັງຢາກເປັນເປັນຜູ້ປະກອບການຢູ່ໃນລະດັບຫຼາຍ ($\bar{X}$ = 4.19 ແລະ SD = 0.901) ແລະ ການວິເຄາະປັດໄຈທີ່ມີຄວາມສຳພັນແບບເສັ້ນຊື່ໄປໃນທິດທາງດຽວກັນ ແລະ ມີຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ແມ່ນປະກອບມີ 2 ປັດໄຈ ຄື: ປັດໄຈດ້ານທັດສະນະຄະຕິຕໍ່ການເປັນຜູ້ປະກອບການ ແລະ ປັດໄຈດ້ານຄວາມສາມາດຂອງຕົນເອງ. ໃນລະດັບຄວາມສຳຄັນທາງສະຖິຕິ 0.01 & 0.05.

**ຄຳສຳຄັນ:** *ປັດໄຈທີ່ສົ່ງຜົນ, ຄວາມຄາດຫວັງ, ການເປັນຜູ້ປະກອບການ, ນັກສຶກສາ*

# Factors Affecting Entrepreneurial Intention of Students at The Northern Agriculture and Forestry College

**Bounleuam OUNTHAPHANH[1], Soudthida HOONGSENGPHA[2], Souksamone SENGCHANH[3]**
*Department of Business Management, Faculty of Economics and Tourism Souphanouvong University, Lao PDR*

***[1]Correspondence:***
*Bounleuam OUNTHAPHANH, Northern Agriculture and Forestry College, +856 20 54948448, E-mail: lanoyounthaphan@gmail.com*
*[2]Confucius Institute, Souphanouvong University, +856 20 5584 2828, E-mail: soudthida@gmail.com*
*[3]Faculty of Economics and Tourism Souphanouvong University, +856 20 59399322, E-mail: souksamone08@gmail.com*

***Article Info:***
*Submitted: Mar 17, 2023*
*Revised: May 15, 2023*
*Accepted: May 28, 2023*

## Abstract

This research aims to study the level of importance and the relationship between Factors Affecting Entrepreneurial Intention among Students at the Northern College of Agriculture and Forestry. Using five indicators of intentions in entrepreneurship theory, including Attitudes, Education, Social norms, Recognition of successful entrepreneurship, and Self-motivation, we can analyze the relationships and factors that have an effect on the expectations of students in entrepreneurship. The sample of this research was 80 students who are studying at the Northern College of Agriculture and Forestry. Using a five-level Likert scale questionnaire to collect data, there is a reliability level of 0.911 (91.1%) and SPSS statistical software for data analysis by frequency, percent, mean, standard Deviation, Pearson Correlation coefficient, and Multiple Regression Analysis.

The result of the research found that 1) The level of importance of the factors that affect the expectation of entrepreneurship of the students of Northern Agriculture and Forestry College as a whole is at a high level (= 789, SD = 0.583), and the level of expectation of entrepreneurship of the students as a whole is at the highest level (= 4.19, SD = 0.901) and The ability factors have a linear relationship, have an effect in the same direction, and result in the creation of Entrepreneurial intentions among Students at the Northern College of Agriculture and Forestry. They include two factors: Attitudes and Self-Motivation with a statistical significance of 0 and 0.05.

**Keywords:** *Factors Affecting, Intention, Entrepreneurship, Students*

## 1. ພາກສະເໜີ

ການເປັນຜູ້ປະກອບກິດຈະການກໍ່ຄືການປະກອບອາຊີບອິດສະຫຼະໄດ້ເກີດຂຶ້ນມາດົນນານ ແລະ ສອດແຊກຢູ່ໃນທຸກລະດັບເສດຖະກິດເລີ່ມຈາກທຸລະກິດຄ້າຍ່ອຍມາສູ່ການເປັນຜູ້ປະກອບກິດຈະການລາຍໃຫຍ່ຈົນເຖິງການຂະຫຍາຍການບໍລິການ, ໃນປັດຈຸບັນມີຫຼາຍໜ່ວຍງານໃຫ້ຄວາມສົນໃຈໃນການສຶກສາ ແລະ ພັດທະນາອາ ຊີບໃຫ້ມີພື້ນຖານຄວາມຮູ້ ແລະ ຄວາມສາມາດ ສັກກະຍາພາບ ແລະ ປະສິດທິພາບໃນການເປັນຜູ້ປະກອບກິດຈະການເພື່ອຫຼຸດຜ່ອນບັນຫາໄພຫວ່າງງານ ແລະ ສົ່ງເສີມໃຫ້ມີຜູ້ປະກອບກິດຈະການຫຼຸ້ນໃໝ່ທີ່ມີຄວາມຄິດສ້າງສັນໃນການດໍາເນີນທຸລະກິດໃໝ່ໃຫ້ຫຼາຍຂຶ້ນ, ເຖິງແນວໃດກໍ່ຕາມການທີ່ຈະເປັນຜູ້ປະກອບກິດຈະການທີ່ດີນັ້ນ ສິ່ງສໍາຄັນຄືຈະຕ້ອງມີຄວາມຕັ້ງໃຈສູງທີ່ຈະເປັນຜູ້ປະກອບກິດຈະການແທ້ຈິງ. ເນື່ອງຈາກວ່າການເປັນຜູ້ປະກອບການນັ້ນ ຕ້ອງທຸ້ມເທທັງຮ່າງກາຍ, ມັນສະໝອງ, ແນວຄິດສ້າງສັນ ແລະ ແຮງຈູງໃຈຢ່າງມະຫາສານເພື່ອຈະກ້າວໄປສູ່ຄວາມສໍາເລັດໃຫ້ໄດ້. ນອກຈາກນີ້, ຜູ້ປະກອບການຍັງມີບົດບາດສໍາຄັນໃນການພັດທະນາເສດຖະກິດ ເພາະການດໍາເນີນກິດຈະກໍາຂອງການປະກອບການ ຄືສິ່ງທີ່ກະຕຸ້ນໃຫ້ເສດຖະກິດຈະເລີນເຕີບໂຕ. ດັ່ງນັ້ນ, ລັດຖະບານ ຈຶ່ງໃຫ້ຄວາມສໍາຄັນກັບທຸລະກິດ SMEs ແລະ ມຸ່ງເນັ້ນສ້າງວັດທະນະທໍາ ຫຼື ສັງຄົມຂອງຜູ້ປະກອບກິດຈະການໃຫ້ມີຄວາມແຜ່ຫຼາຍເພື່ອສະໜັບສະໜູນວຽກງານສ້າງສາພັດທະນາປະເທດຊາດ ແລະ ຂັບເຄື່ອນເສດຖະກິດໃຫ້ນັບມື້ຂະຫຍາຍຕົວ ແລະ ສາມາດແຂ່ງຂັນກັບບັນດາປະເທດໃນລະດັບສາກົນໄດ້ຢ່າງຍືນຍົງ (Thongsouk & Bountom, 2022).

ການຂະຫຍາຍຕົວຢ່າງວ່ອງໄວຂອງທຸລະກິດໃນປັດຈຸບັນເປັນຜົນຈາກການທີ່ທຸລະກິດຂະໜາດໃຫຍ່ຈໍານວນຫຼາຍຫຼຸດຂະໜາດຂອງຕົວເອງລົງເຮັດໃຫ້ຕະຫຼາດແຮງງານບໍ່ສາມາດຮອງຮັບຜູ້ຫວ່າງງານໄດ້ທັງໝົດ ຜູ້ຫວ່າງງານຈຶ່ງຊອກຫາຊ່ອງທາງທີ່ຈະປະກອບທຸລະກິດດ້ວຍຕົນເອງ ນອກຈາກນັ້ນການປະຊາສໍາພັນສະໜັບສະໜູນຈາກພາກລັດໄໄດ້ກະຕຸ້ນໃຫ້ເກີດກະແສຄວາມຄິດຢາກປະກອບການທຸລະກິດຂອງຕົນເອງຢ່າງກວ້າງຂວາງທັງໃນບຸກຄົນທົ່ວໄປ, ນັກສຶກສາ ແລະ ຜູ້ທີ່ຈົບການສຶກສາໃໝ່ໆ ເກີດກະແສຄວາມຄິດນີ້ ເປັນສິ່ງທີ່ດີຕໍ່ການພັດທະນາເສດຖະກິດ ແລະ ປະເທດຊາດ (Yawichai, 2009).

ທຸລະກິດຂະໜາດນ້ອຍກໍ່ເປັນທຸລະກິດທີ່ມີການດໍາເນີນການທີ່ມີຄວາມເປັນອິດສະຫຼະ ມີຈໍານວນພະນັກງານໜ້ອຍໃຊ້ງົບປະມານໃນການລົງທຶນບໍ່ຫຼາຍ ການດໍາເນີນງານກໍ່ບໍ່ຫຍຸ້ງຍາກ-ຊັບຊ້ອນ ແລະ ມີຄວາມຄ່ອງຕົວສູງ. ຈາກລັກສະນະດັ່ງກ່າວນີ້ ເຮັດໃຫ້ທຸລະກິດຂະໜາດນ້ອຍເປັນທຸລະກິດທີ່ເປີດໂອກາດຢ່າງຫຼວງຫຼາຍ ແລະ ກວ້າງຂວາງກັບຜູ້ທີ່ມີຄວາມຕັ້ງໃຈທີ່ຕ້ອງການຈະເປັນຜູ້ປະກອບການ ໂດຍມີຄວາມຄິດໃນການລິເລີ່ມ ແລະ ກ້າສ່ຽງ ເພື່ອສະແຫວງຫາຄວາມກ້າວໜ້າ ໂດຍການທີ່ຍັງບໍ່ມີປະສົບການ ຫຼື ປະສົບການໜ້ອຍ, ມີເງິນລົງທຶນບໍ່ຫຼາຍໄດ້ມີການປະກອບອາຊີບທີ່ຕົນເອງມັກ ເກີດການຮຽນຮູ້, ຄວາມພາກພູມໃຈ ແລະ ນໍາໄປສູ່ຄວາມສໍາເລັດໃນຊີວິດ (Phusadi, 1997).

ເຖິງຢ່າງໃດກໍ່ຕາມການທີ່ຈະເປັນຜູ້ປະກອບການທີ່ດີໄດ້ນັ້ນ, ສິ່ງໜຶ່ງທີ່ສໍາຄັນຄື ຈະຕ້ອງມີຄວາມຕັ້ງໃຈສູງທີ່ຈະເປັນຜູ້ປະກອບການ ເນື່ອງຈາກການເປັນຜູ້ປະກອບການຂອງຕົນເອງຕ້ອງທຸ່ມເທທັງແຮງງານ ແລະ ແຮງໃຈຢ່າງມະຫາສານໃນການທີ່ຈະໄປເຖິງຄວາມສໍາເລັດໄດ້ ຄືການທີ່ບຸກຄົນໃສ່ໃຈຢູ່ກັບສິ່ງໃດສິ່ງໜຶ່ງຫຼາຍກວ່າສິ່ງອື່ນໆ ມີການຕອບສະໜອງຕໍ່ສິ່ງນັ້ນ. ດັ່ງນັ້ນ, ຄວາມຕ້ອງການ ແລະ ຕັ້ງໃຈໃນການເປັນຜູ້ປະກອບການຂອງບຸກຄົນເປັນການສະແດງເຈດຈໍານົງທີ່ມຸ້ງໝັ້ນ ໃສ່ໃຈໃນການກ້າວເຂົ້າສູ່ອາຊີບເປັນຜູ້ປະກອບການ. ເພາະວ່າ ຄວາມຕັ້ງໃຈເປັນປັດໄຈທີ່ກໍານົດພຶດຕິກໍາຂອງບຸກຄົນໄດ້ດີທີ່ສຸດ ແລະ ເປັນຕົວປ່ຽນທີ່ສາມາດນໍາມາພະຍາກອນກ່ຽວກັບພຶດຕິກໍ່າທີ່ດີໄດ້ (Kanitprasert, 2000).

ໃນແຕ່ລະປີມີຜູ້ສໍາເລັດການສຶກສາຈາກ ວິທະຍາໄລກະສິກໍາ ແລະ ປ່າໄມ້ພາກເໜືອ ຍັງມີຈໍານວນຫຼາຍ ທີ່ຍັງບໍ່ມີວຽກເຮັດງານທໍາ ບວກກັບ ໂຄຕາບັນຈຸພະນັກງານໃນອົງກອນທັງພາກລັດ ແລະ ເອກະຊົນນັບມື້ນັບໜ້ອຍລົງເຮັດໃຫ້ນັກສຶກສາທີ່ຈົບການສຶກສາໄປຕ້ອງອາໄສຄວາມພະຍາຍາມຢ່າງຫຼວງຫຼາຍໃນການຊອກຫາວຽກເຮັດງານທໍາ ແລະ ສ່ວນໜຶ່ງຕົກຢູ່ໃນສະພາບທີ່ຫວ່າງງານ ແລະ ການທຸ່ມເທ

ຄວາມພະຍາຍາມ-ຊັບສິນທີ່ໃຊ້ໄປສຳລັບການສຶກສາກໍ່ຈະບໍ່ເກີດຜົນ. ຖ້ານັກສຶກສາຈົບໄປແລ້ວບໍ່ມີວຽກເຮັດງານທຳ ແລະ ບໍ່ສາມາດນຳຄວາມຮູ້ມາໃຊ້ເພື່ອໃຫ້ເກີດປະໂຫຍດໄດ້ ການກ້າວສູ່ອາຊີບຜູ້ປະກອບການເປັນອີກທາງເລືອກໜຶ່ງທີ່ເຮັດໃຫ້ນັກສຶກສາສາມາດສ້າງງານໄດ້ດ້ວຍຕົນເອງ ແລະ ການທີ່ຈະເປັນຜູ້ປະກອບການຄວນມີຄວາມຕັ້ງໃຈ, ມີຄວາມຄາດຫວັງ, ມີການກຽມຄວາມພ້ອມຂອງຕົນໃນຫຼາຍດ້ານ ໂດຍສະເພາະ ທັກສະຄວາມສາມາດ ແລະ ການວາງແຜນເພື່ອກ້າວເປັນຜູ້ປະກອບການໃນທຸລະກິດໃດໜຶ່ງໄດ້ ຫຼັງຈາກຈົບການສຶກສາ.

ດັ່ງນັ້ນ, ການເປັນຜູ້ປະກອບການໃໝ່ຈາກນັກສຶກສາ ກໍ່ເປັນອີກທາງເລືອກທີ່ຜູ້ສຶກສາມີຄວາມສົນໃຈ ເພາະການປະປະກອບການໃນດ້ານຕ່າງໆກໍ່ເປັນສິ່ງທີ່ຈຳເປັນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມໂດຍທີ່ທຸກຂະແໜງການລ້ວນແຕ່ມີສ່ວນຮ່ວມໃນການຂັບເຄື່ອນລະບົບນີ້. ໂດຍມີນັກວິຊາການຫຼາຍທ່ານໄດ້ພະຍາຍາມສຶກສາຫາສາເຫດຂອງການປະກອບອາຊີບເຊິ່ງປະກອບມີ ທາງດ້ານພຶດຕິກຳ, ດ້ານການສຶກສາ, ດ້ານຄວາມສາມາດ, ດ້ານທັດສະນະຄະຕິ ແລະ ແຮງຈູງໃຈ ເຫຼົ່ານີ້ເປັນຕົ້ນ ໃນການເປັນຜູ້ປະກອບການ (Mekra, 2023; Triphopsakul, 2015& Sattayarakwit, 2014). ຜູ້ປະກອບການສາມາດເຮັດສິ່ງນີ້ໄດ້ໃນເວລາທີ່ພວກເຂົາຍັງບໍ່ທັນເປັນຜູ້ປະກອບການທີ່ແທ້ຈິງ ຫຼື ກຳລັງສຶກສາເພື່ອກະກຽມຄວາມພ້ອມທີ່ຈະກ້າວເຂົ້າສູ່ການເປັນຜູ້ປະກອບການໃນອະນາຄົດ ແລະ ລັກສະນະທີ່ສຳຄັນຂອງຜູ້ປະກອບການສຳລັບໄວໜຸ່ມ ແມ່ນການຮັບຮູ້ ແລະ ຄວາມໝັ້ນໃຈວ່າ ພວກເຂົາມີແນວໂນ້ມທີ່ຈະສ້າງທຸລະກິດ ແລະ ມີແຜນການທີ່ຈະເຮັດມັນໃນອະນາຄົດ ລວມທັງປັດໄຈທີ່ສົ່ງຜົນກະທົບຕໍ່ຄວາມຄາດຫວັງທີ່ຈະເປັນຜູ້ປະກອບການ ດັ່ງນັ້ນຈຶ່ງມີຄວາມສຳຄັນເນື່ອງຈາກວ່າຄວາມຄາດຫວັງແມ່ນຕົວປ່ຽນໜຶ່ງທີ່ສຳຄັນ ແລະ ມີຜົນຕໍ່ພຶດຕິກຳໃນອະນາຄົດໄດ້ (Ajzen, 1991).

ຈຸດປະສົງໃນການສຶກສາໃນຄັ້ງນີ້ແມ່ນ 1) ສຶກສາລະດັບຄວາມສຳຄັນຂອງປັດໄຈໃນການກ້າວສູ່ການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ແລະ 2) ວິເຄາະປັດໄຈທີ່ສົ່ງຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບກິດຈະການຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ.

## 2. ວິທີການດຳເນີນການຄົ້ນຄ້ວາ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາແມ່ນແບບສອບຖາມເປັນແບບປະເມີນຄ່າ (Likert Scale,1932) ໃຫ້ຜູ້ຕອບແບບສອບຖາມໄດ້ສະແດງຄວາມຄິດເຫັນເປັນ 5 ລະດັບຕາມຄວາມເປັນຈິງໃນດ້ານຕ່າງໆ ແລະ ຜົນຂອງການຫາຄ່າຄວາມເຊື່ອໝັ້ນ (Reliability) ດ້ວຍຄ່າສຳປະສິດຂອງ Cronbach’s Alpha ໄດ້ຄ່າຄວາມເຊື່ອໝັ້ນເທົ່າກັບ 0.911 (91.1%). ເຊິ່ງປັດໄຈທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນປະກອບມີ ດ້ານທັດສະນະຄະຕິ, ດ້ານການສຶກສາ, ດ້ານບັນທັດຖານທາງສັງຄົມ, ດ້ານການຮັບຮູ້ການເປັນຜູ້ປະກອບການທີ່ປະສົບຜົນສຳເລັດ ແລະ ດ້ານຄວາມສາມາດຂອງຕົນເອງ (Kolvereid, 1996) ແລະ (Marayat & Songwad, 2016). ໃນການວິເຄາະຫາປັດໄຈທີ່ມີຜົນໃນຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ.

### 2.2 ວິທີການຄົ້ນຄ້ວາ

ເປັນການສຶກສາຄົ້ນຄວ້າແບບປະລິມານໂດຍການລົງສຳຫລວດ (Survey Research). ກຸ່ມຕົວຢ່າງທີ່ໃຊ້ການສຶກສາ ແມ່ນນັກສຶກສາທີ່ກຳລັງຮຽນຢູ່ໃນ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ຈຳນວນ 80 ຄົນ. ຫຼັງຈາກນັ້ນ, ນຳຂໍ້ມູນມາກວດກາ ສ້າງຖານປ້ອນຂໍ້ມູນ ແລະ ທຳການວິເຄາະຫາຄ່າສະຖິຕິຕ່າງໆ ດ້ວຍການນຳໃຊ້ໂປຼແກຼມສຳເລັດຮູບສະຖິຕິ (SPSS 24.0) ໃນການປະມວນຜົນປະກອບມີ ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າເພຍສັນ (Pearson Correlation) ແລະ ສົມຜົນທົດຖອຍພະຫຸຄູນ (Multiple Regression) ດ້ວຍວິທີ Enter ໃນລະດັບຄວາມສຳຄັນທາງສະຖິຕິ $P \leq 0.05$.

### 2.3 ສົມມຸດຖານການສຶກສາ:

ປັດໄຈດ້ານຄວາມຕ້ອງການ ຫຼື ຕັ້ງໃຈໃນການເປັນຜູ້ປະກອບການຂອງນັກສຶກສາມີຄວາມສຳພັນທາງບວກ ແລະ ສົ່ງຜົນຕໍ່ກັບຄວາມຄາດຫວັງໃນການເປັນຜູ້ປະກອບການໃນທຸລະກິດໃດໜຶ່ງຂອງນັກສຶກສາ ວິທະຍາໄລກະສິ

ກຳ ແລະ ປ່າໄມ້ພາກເໜືອ.

### 2.4 ກອບແນວຄິດໃນການຄົ້ນຄວ້າ




## 3. ຜົນໄດ້ຮັບ

### 3.1 ຄວາມສຳຄັນຂອງບັນດາປັດໄຈໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ

ຜົນການສຶກສາກຸ່ມຕົວຢ່າງທີ່ມີຄວາມຄິດເຫັນກ່ຽວກັບ ປັດໄຈທີ່ມີຄວາມສຳຄັນຕໍ່ການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ. ໂດຍລວມແລ້ວ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3.79, SD=0.583) ໃນນັ້ນ, ປັດໄຈທີ່ມີລະດັບຄວາມສຳຄັນຫຼາຍກ່ວາໝູ່ແມ່ນປັດໄຈດ້ານທັດສະນະຄະ ຕິຕໍ່ການເປັນຜູ້ປະກອບການ ($\bar{X}$=3.99, SD=0.644) ຮອງລົງມາແມ່ນປັດໄຈດ້ານການສຶກສາສູ່ການເປັນຜູ້ປະກອບການ ($\bar{X}$= 3.83, SD=0.750) ຖັດມາລົງມາແມ່ນປັດໄຈດ້ານບັນທັດຖານທາງສັງຄົມ, ຄອບຄົວ ແລະ ໝູ່ເພື່ອນ ($\bar{X}$3.73, SD=0.733) ຕໍ່ມາແມ່ນປັດໄຈດ້ານການຮັບຮູ້ໃນການເປັນຜູ້ປະກອບການທີ່ປະສົບຜົນສຳເລັດ ($\bar{X}$=3.723, SD= 0.742) ແລະ ສຸດທ້າຍແມ່ນປັດໄຈດ້ານຄວາມສາມາດຂອງຕົນເອງ ($\bar{X}$=3.67, SD=0.762) ຕາມລຳດັບ.

### 3.2 ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການເປັນຜູ້ປະກອບການໃນທຸລະກິດໃດໜຶ່ງຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ.

ຜົນການສຶກສາກຸ່ມຕົວຢ່າງທີ່ມີຄວາມຄິດເຫັນກ່ຽວກັບ ຄວາມຄາດຫວັງໃນການເປັນຜູ້ປະກອບການ ແມ່ນເຫັນວ່າ ມີຄວາມຄາດຫວັງຢູ່ໃນລະດັບຫຼາຍ ($\bar{X}$=4.19 ແລະ SD = 0.901). ເຊິ່ງປະກອບມີ ຄວາມຄາດຫວັງເປັນຜູ້ປະກອບການທີ່ມີຊື່ສຽງ ຫຼື ເປັນທີ່ຮູ້ຈັກໃນສັງຄົມ ($\bar{X}$= 4.04 ແລະ SD=1.037); ມີຄວາມຄາດຫວັງສ້າງຕັ້ງທຸລະກິດໃດໜຶ່ງເປັນຂອງຕົນເອງ ($\bar{X}$=4.15 ແລະ SD= 0.813) ແລະ ມີຄວາມຄາດຫວັງຈະສ້າງທຸລະກິດແບບໃໝ່ໃຫ້ແທດເໝາະກັບສັງຄົມຍຸກໃໝ່ ($\bar{X}$ = 4.24 ແລະ SD = 0.815).

ຜົນການທົດສອບຄວາມສຳພັນດ້ວຍຄ່າຂອງ Pearson ກ່ຽວກັບປັດໄຈທີ່ມີຄວາມສຳພັນກັບຄວາມຄາດຫວັງໃນການເປັນຜູ້ປະກອບການທຸລະກິດໃດໜຶ່ງ ຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ. ໂດຍປັດໄຈທີ່ໃຊ້ເຂົ້າໃນການວິເຄາະຄັ້ງນີ້ມີທັງໝົດ 5 ປັດໄຈທີ່ໃຊ້ເປັນຕົວປ່ຽນອິດສະຫຼະ ແລະ ພົບວ່າ ປັດໄຈດ້ານທັດສະນະຄະຕິຕໍ່ການເປັນຜູ້ປະກອບການ ($X_1$), ປັດໄຈດ້ານການສຶກສາສູ່ການເປັນຜູ້ປະກອບການ ($X_2$), ປັດໄຈດ້ານບັນທັດຖານທາງສັງຄົມ, ຄອບຄົວ ແລະ ໝູ່ເພື່ອນ ($X_3$), ປັດໄຈດ້ານການຮັບຮູ້ໃນການເປັນຜູ້ປະກອບການທີ່ປະສົບຜົນສຳເລັດ ($X_4$) ແລະ ປັດໄຈດ້ານຄວາມສາມາດຂອງຕົນເອງ ($X_5$) ແມ່ນມີຄວາມສຳພັນກັບຄວາມຄາດຫວັງນການເປັນຜູ້ປະກອບການໃນທຸລະກິດໃດໜຶ່ງຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ ໃນ

ລະດັບປານກາງທີ່ມີຄ່າຄວາມສຳພັນສະເລ່ຍ ລະຫວ່າງ 0.41-0.60 (Sig<0.01) ດັ່ງໃນຕາຕະລາງ 1.

ຜົນການວິເຄາະການຖົດຖອຍພະຫຸຄູນໃນການພະຍາກອນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການທຸລະກິດໃດໜຶ່ງ ຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ. ທັງໝົດ 5 ປັດໄຈໃນການຄັດເລືອກເຂົ້າສູ່ການວິເຄາະເພື່ອການພະຍາກອນພົບວ່າ ມີພຽງ 2 ປັດໄຈ ທີ່ສົ່ງຜົນຄວາມຄາດຫວັງໃນການເປັນຜູ້ປະກອບການທຸລະກິດໃດໜຶ່ງຂອງນັກສຶກສາ ວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ ຄື: ປັດໄຈດ້ານທັດສະນະຄະຕິຕໍ່ການເປັນຜູ້ປະກອບການ ($X_1$) ແລະ ປັດໄຈດ້ານຄວາມສາມາດຂອງຕົນເອງ ($X_5$) ທີ່ມີຄວາມສຳພັນກັນແບບເສັ້ນຊື່ກັບຄວາມຄາດຫວັງໃນການເປັນຜູ້ປະກອບການທຸລະກິດໃດໜຶ່ງຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ. ໂດຍຕົວປ່ຽນເຫຼົ່ານີ້ມີຄວາມສຳພັນທາງບວກ ແລະ ມີຜົນຕໍ່ການພະຍາກອນໃນລະດັບ 62.4% (R=0.624) ທີ່ມີຄ່າຄວາມຊັດເຈນ 39% ($R^2$= 0.390) ດັ່ງໃນຕາຕະລາງ 2.

ໂດຍສາມາດສ້າງສົມຜົນໃນການພະຍາກອນໃນຮູບແບບດັ່ງນີ້:

$$\hat{Y} = 0.411\ X_1 + 0.379 X_5$$

## 4. ວິພາກຜົນ

ຈາກການສຶກສາກ່ຽວກັບຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ. ເຫັນວ່າ ມີຄວາມຄາດຫວັງຢູ່ໃນລະດັບຫຼາຍ. ເຊິ່ງມີຄວາມສອດຄ່ອງກັບບົດວິໄຈຂອງ Rungsuk (2016) ທີ່ໄດ້ສຶກສາ “ປັດໄຈທີ່ມີຜົນຕໍ່ຄວາມຕັ້ງໃຈທີ່ຈະເປັນຜູ້ປະກອບການຂອງນັກສຶກສາ, ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລເທັກໂນໂລຢີລາດຊະມົງຄົນລັດຕະນະໂກສິນ”. ທີ່ຜົນການສຶກສາພົບວ່າ ນັກສຶກສາມີລະດັບຄວາມຕັ້ງໃຈ/ຕ້ອງການທີ່ຈະເປັນຜູ້ປະກອບການໂດຍລວມຢູ່ໃນລະດັບຫຼາຍ ແລະ Thongsouk & Bountom (2022) ທີ່ໄດ້ສຶກສາ “ປັດໄຈທີ່ສົ່ງຜົນຕໍ່ຄວາມຕັ້ງໃຈໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລ ລາວ-ອາເມລິກາ”. ທີ່ຜົນການສຶກສາພົບວ່າ ນັກສຶກສາມີຄວາມຕັ້ງໃຈທີ່ຈະເປັນຜູ້ປະກອບການແມ່ນຢູ່ໃນລະດັບຫຼາຍ.

ຈາກການສຶກສາປັດໄຈທີ່ມີຄວາມສຳຄັນໃນການທີ່ຈະເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ໂດຍລວມແມ່ນຢູ່ໃນລະດັບຫຼາຍ, ເຊິ່ງມີຄວາມສອດຄ່ອງກັບບົດວິໄຈ Linan & Rodriguez (2015) ທີ່ໄດ້ສຶກສາປັດໄຈທີ່ມີຜົນຕໍ່ລະດັບຄວາມຕັ້ງໃຈໃນການເປັນຜູ້ປະກອບການຂອງງນັກສຶກສາ ຜົນການສຶກສາພົບວ່າ ປັດໄຈທີ່ມີຄວາມສຳຄັນຕໍ່ການຕັ້ງໃຈ/ຕ້ອງການເປັນຜູ້ປະກອບການໂດຍ ລວມຢູ່ໃນລະດັບຫຼາຍ.

ຈາກການວິເຄາະປັດໄຈທີ່ສົ່ງຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ ພົບວ່າ ປັດໄຈດ້ານທັດສະນະຄະຕິຕໍ່ການເປັນຜູ້ປະກອບການ ເປັນປັດໄຈທຳອິດທີ່ມີຜົນໃນທາງບວກ ແລະ ສາມາດນຳໃຊ້ເຂົ້າໃນການພະຍາກອນຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາໄດ້ໃນລະດັບຄວາມສຳຄັນທາງສະຖິ ຕິ 0.01. ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ Marayat & Songwad (2016) ໄດ້ສຶກສາໃນຫົວຂໍ້ Influencing factor that develops the entrepreneurial minset in science and technology undergraduate students of Mahidol University” ແລະ Jatophan (2019) ສຶກສາໃນຫົວຂໍ້ Factors affecting entrepreneurial intention of undergraduate students: a case study of Bangkok University ເຊິ່ງໃນການສຶກສາພົບວ່າ: ທັດສະນະຄະຕິຕໍ່ການເປັນຜູ້ປະກອບການທີ່ສົ່ງຜົນ ແລະ ມີອິດທິພົນຕໍ່ຄວາມຕັ້ງໃຈ/ຕ້ອງການທີ່ຈະເປັນຜູ້ປະກອບການຂອງນັກສຶກສາ ໄດ້ຢ່າງມີຄວາມສຳຄັນທາງສະຖິຕິ 0.01.

ຈາກການວິເຄາະປັດໄຈທີ່ສົ່ງຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ ພົບວ່າ ປັດໄຈດ້ານຄວາມສາມາດຂອງຕົນເອງເປັນປັດໄຈທີ່ສອງທີ່ມີຜົນໃນທາງບວກ ແລະ ສາມາດນຳໃຊ້ເຂົ້າໃນການພະຍາກອນຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາໄດ້ໃນລະດັບຄວາມສຳຄັນທາງສະຖິຕິ 0.05. ເຊິ່ງມີຄວາມສອດຄ່ອງ

ກັບການສຶກສາຂອງ Pommi & Naksai (2020) ໄດ້ສຶກສາໃນຫົວຂໍ້ Factors Influencing Entrepreneurial Intentions of Students in the Entrepreneurship: University of Phayao" ແລະ Tadawattanawit (2022) ໄດ້ສຶກສາໃນຫົວຂໍ້ Factors affecting modern entrepreneurs of new entrepreneurs in the hospitality and tourism industry ປັດໄຈດ້ານການຮັບຮູ້ຄວາມສາມາດຂອງຕົນ, ສາມາດພະຍາກອນຄວາມຕັ້ງໃຈໃນການເປັນຜູ້ປະກອບການຂອງນັກສຶກສາ ໄດ້ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

## 5. ສະຫຼຸບ

ຜົນການສຶກສາກ່ຽວກັບຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ ເຫັນວ່າ ມີຄວາມຄາດຫວັງຢູ່ໃນລະດັບຫຼາຍ ($\bar{X}$ = 4.19 ແລະ SD = 0.901). ເຊິ່ງໃນນັ້ນປະກອບມີ: ຄວາມຄາດຫວັງເປັນຜູ້ປະກອບການທີ່ມີຊື່ສຽງ ຫຼື ເປັນທີ່ຮູ້ຈັກໃນສັງຄົມ; ມີຄວາມຄາດຫວັງສ້າງຕັ້ງທຸລະກິດໃດໜຶ່ງເປັນຂອງຕົນເອງ ແລະ ມີຄວາມຄາດຫວັງຈະສ້າງທຸລະກິດແບບໃໝ່ໃຫ້ແທດເໝາະກັບສັງຄົມຍຸກໃໝ່.

ຜົນການສຶກສາ ປັດໄຈທີ່ສົ່ງຜົນຕໍ່ຄວາມຄາດຫວັງໃນການເປັນຜູ້ປະກອບການ ຂອງນັກສຶກສາວິທະ ຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອ ພົບວ່າ ມີພຽງ 2 ປັດໄຈທີ່ສົ່ງຜົນ ຫຼື ມີອິດທິພົນຕໍ່ການຄວາມຄາດຫວັງໃນການເປັນຜູ້ປະກອບການຂອງນັກສຶກສາວິທະຍາໄລ ກະສິກຳ ແລະ ປ່າໄມ້ ພາກເໜືອຄື: ປັດໄຈດ້ານທັດສະນະຄະຕິຕໍ່ການເປັນຜູ້ປະກອບການ ແລະ ປັດໄຈດ້ານຄວາມສາມາດຂອງຕົນເອງ ທີ່ມີຄວາມສຳພັນແບບເສັ້ນຊື່ ແລະ ສົ່ງຜົນໃນທາງບວກ ທີ່ມີລະດັບຄວາມສຳຄັນທາງສະຖິຕິ 0.05 = 95%.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 8. ເອກະສານອ້າງອີງ


Ajzen, I. (1991). The theory of planned behavior. Organizational Behavior and Human Decision Processes, 50(2) 1–63.

Anong Rungsuk. (2016) Determinants Affecting the Intention to Become Entrepreneur od Students Faculty of Business Administration, Rajamangala University of Technology Rattanakosin.

Chanchai Pommi and Sirima Naksai. (2020). Factors Influencing Entrepreneurial Intentions of Students in the Entrepreneurship Focused Programs at the University of Phayao. School of Management and Information Sciences, University of Phayao.

Jatophan PAPONSOMBOUN. (2019). Influencing factor that develops the entrepreneurial inset in science and technology undergraduate students of Mahidol University.

Kolvereid, L. (1996). Organizational employment versus self-employment: Reasons for career choice intentions. *Entrepreneurship Theory and Practice*, 20(3), 23–31.

Likert Rensis. (1932). "A Technique for the Measurement of Attitudes" archives of Psychilogy. 104: 1-55.

Linan, F., & Rodriguez-Cohard, J. C. (2015). Assessing the stability of graduates' entrepreneurial intention and exploring its predictive capacity. Academia Revista Latino Americana de Administration, 28(1), 77-98.

Mantkan Mekra. (2023). Factors predicting the intention to become an entrepreneur of students,Chiang Mai University. Thesis of Chiang Mai University of Thailand.

Marayat Yotongyos & Songwad Sukmaungma. (2016). Factors affecting entrepreneurial intention of undergraduate students: a case study of Bangkok University. Information Technology Department, School of Science and Technology, Bangkok

University. Vol.30 No.95 July - September 2016.

Saranya Kanitprasert. (2000). Attitudes Subjective Norms and Intention to Use Computer in Health Care Service of Professional Nurses in Nongkhai Hospital. Thesis of Chiang Mai University of Thailand.

Sattayarakwit. (2014). Characteristics of Entrepreneurship and Characteristics of Establishments Affecting: SMEs Report on 2014.

Siriporn Yawichai. (2009). The need to be an entrepreneur of students of Fucutlty of Business Administration, Maejo University. Final Project of Business Administraion. Maejo University of Thailand.

Rumakam Phusadi. (1997). Small Business Management Textbook. Bangkok: Physics Center Publishing.

Suchart Tripopsakul. (2015). The comparative study of attitudes toward entrepreneurial intention between ASEAN and EUROPE: 78.

Surakiat Tadawattanawit. (2022). Factors affecting modern entrepreneurs of new entrepreneurs in the hospitality and tourism industry. Journal of Humanities and Social Sciences Nakhon Phanom University; Vol. 12 No.2 May-August 2022.

Thongsouk & Bountom. (2022). The factors affecting entrepreneurial intention of students at the Lao- American College. Final Project of Business Management. National University of Laos, Lao PDR.

**ຕາຕະລາງ 1:** ການທົດສອບຄວາມສຳພັນດ້ວຍຄ່າຂອງ Pearson ກ່ຽວກັບປັດໄຈທີ່ມີຄວາມສຳພັນກັບຄວາມຄາດຫວັງໃນການເປັນຜູ້ປະກອບການໃນທຸລະກິດໃດໜຶ່ງຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ.

| **Correlations** | | | | | | | |
|---|---|---|---|---|---|---|---|
| | | X1 | X2 | X3 | X4 | X5 | Y |
| X1 | Pearson Correlation | 1 | .406** | .527** | .498** | .521** | .551** |
| X2 | Pearson Correlation | .406** | 1 | .564** | .439** | .656** | .297** |
| X3 | Pearson Correlation | .527** | .564** | 1 | .569** | .698** | .344** |
| X4 | Pearson Correlation | .498** | .439** | .569** | 1 | .619** | .431** |
| X5 | Pearson Correlation | .521** | .656** | .698** | .619** | 1 | .503** |
| Y | Pearson Correlation | .551** | .297** | .344** | .431** | .503** | 1 |
| **. Correlation is significant at the 0.01 level (2-tailed). | | | | | | | |

**ຕາຕະລາງ 2:** ຜົນການທົດຖອຍພະຫຸຄູນກ່ຽວກັບປັດໄຈທີ່ສົ່ງຜົນກັບຄວາມຄາດຫວັງໃນການເປັນຜູ້ປະກອບການໃນທຸລະກິດໃດໜຶ່ງຂອງນັກສຶກສາວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ.

| | **B** | **S.E.** | **Beta** | **t** | **sig** |
|---|---|---|---|---|---|
| (Constant) | .811 | .579 | | 1.401 | .165 |
| **ດ້ານທັດສະນະຄະຕິຕໍ່ການເປັນຜູ້ປະກອບການ ($X_1$)** | .575 | .158 | .411 | 3.638 | **.001**** |
| ດ້ານການສຶກສາສູ່ການເປັນຜູ້ປະກອບການ ($X_2$) | -.096 | .148 | -.080 | -.653 | .516 |
| ດ້ານບັນທັດຖານທາງສັງຄົມ, ຄອບຄົວ ແລະ ໝູ່ເພື່ອນ ($X_3$) | -.195 | .167 | -.159 | -1.166 | .247 |
| ດ້ານການຮັບຮູ້ການເປັນຜູ້ປະກອບການທີ່ປະສົບຜົນສຳເລັດ ($X_4$) | .142 | .148 | .117 | .960 | .340 |
| **ດ້ານຄວາມສາມາດຂອງຕົນເອງ ($X_5$)** | .448 | .179 | .379 | 2.503 | **.015*** |
| R = 0.624; $R^2$= 0.390, SEE=0.728, F=9.450, sig of F=0.000 | | | | | |

*ໝາຍເຫດ: **. ຄວາມສຳພັນທາງສະຖິຕິທີ່ລະດັບ 0.01, * ມີຄວາມສຳພັນທາງສະຖິຕິທີ່ລະດັບ 0.05*